**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 5952 /ກປ

ນະຄອນຫຼວງວຽງຈັນ, ວັນທີ 23 DEC 2022

# ຄຳແນະນຳ
## ກ່ຽວກັບ ການຄຸ້ມຄອງ ໄມ້ຜະລິດຖ່ານຂາວ ແລະ ການເຄື່ອນຍ້າຍ ຖ່ານຂາວ

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ຄຳສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາ ການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ ສະບັບເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີ ຂອງກົມປ່າໄມ້ ສະບັບເລກທີ 6395/ກປມ, ລົງວັນທີ 25 ຕຸລາ 2022.

ໃນໄລຍະຜ່ານມາ, ລັດຖະບານ ໄດ້ມີນະໂຍບາຍສົ່ງເສີມ ການປູກ, ຟື້ນຟູປ່າໄມ້ທຳມະຊາດ ແລະ ຂຸດຄົ້ນ, ເຄື່ອນຍ້າຍໄມ້ຕິ້ວ ແລະ ໄມ້ຊະນິດອື່ນ ເພື່ອຜະລິດເປັນຖ່ານຂາວ ຈຳໜ່າຍ ພາຍໃນ ແລະ ສົ່ງອອກຕ່າງປະເທດ ອັນໄດ້ສ້າງລາຍຮັບ ໃຫ້ປະຊາຊົນດີພໍສົມຄວນ, ແຕ່ຄຽງຄູ່ກັນນັ້ນ ການຄຸ້ມຄອງຂອງພາກລັດ ຍັງບໍ່ທັນຕິດພັນກັບການຊຸກຍູ້ ສົ່ງເສີມ ປະຊາຊົນປູກ ແລະ ຟື້ນຟູປ່າໄມ້ທຳມະຊາດ ຕາມທິດສີຂຽວ ແລະ ຍືນຍົງ, ເກີດມີປະກົດການລັກລອບຕັດ, ຂຸດຄົ້ນ, ເຄື່ອນຍ້າຍ ໄມ້ ແລະ ຖ່ານ ຈາກປ່າທຳມະຊາດ ຢ່າງຊະຊາຍ.

ເພື່ອຄຸ້ມຄອງ ການຂຸດຄົ້ນໄມ້ ຜະລິດຖ່ານຂາວ ແລະ ການເຄື່ອນຍ້າຍ ຖ່ານຂາວ ເຂົ້າສູ່ກົດໝາຍ ທັງເປັນການຊຸກຍູ້ສົ່ງເສີມການຜະລິດຖ່ານຂາວ ຈາກໄມ້ປູກ ເປັນສິນຄ້າສົ່ງອອກ ໃຫ້ມີຄວາມຍືນຍົງ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ນັ້ນ.

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຄຳແນະນຳ:

### 1. ຈຸດປະສົງ

ຄຳແນະນຳສະບັບນີ້ ກຳນົດຫຼັກການ, ຂັ້ນຕອນ ແລະ ວິທີການ ຄຸ້ມຄອງການຂຸດຄົ້ນໄມ້, ການເຄື່ອນຍ້າຍໄມ້ ແລະ ການເຄື່ອນຍ້າຍຖ່ານຂາວ ພາຍໃນ ແລະ ສົ່ງອອກຕ່າງປະເທດ ແນໃສ່ສົ່ງເສີມການຜະລິດຖ່ານຂາວຈາກໄມ້ປູກ ເປັນສິນຄ້າແບບຍືນຍົງ ແລະ ທັງຄ້ຳປະກັນໃຫ້ການຜະລິດຖ່ານຖືກຕ້ອງ ຕາມລະບົບການຄຸ້ມຄອງຕ່ອງໂສ້ການສະໜອງໄມ້ ແລະ ຜະລິດຕະພັນໄມ້ ທີ່ກົດໝາຍ ແລະ ລະບຽບການກຳນົດໄວ້.

### 2. ຂອບເຂດການນຳໃຊ້

ຄຳແນະນຳສະບັບນີ້ ນຳໃຊ້ສະເພາະ ການຜະລິດຖ່ານຂາວຈາກ ໄມ້ຕິ້ວ ແລະ ໄມ້ຊະນິດອື່ນ ໃນ ສປປ ລາວ ທີ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ໄດ້ລົງທຶນໃສ່ ການຄຸ້ມຄອງ, ການປູກ ຫຼື ລົງທຶນປູກ ໂດຍນຳໃຊ້ເຕັກນິກ ການເຜົາ ໃນອຸນຫະພູມ ແຕ່ 1.000 ອົງສາເຊ ຂຶ້ນໄປ ເພື່ອຜະລິດຖ່ານຂາວ ອອກມາ ມີຄຸນນະພາບ ແລະ ແຂງແກ່ນ, ເວລາຈູດ ຈະບໍ່ມີຄວັນດຳຫຼາຍ ຕາມທີ່ກົດໝາຍໄດ້ກຳນົດ.

## 3. ຫຼັກການ, ຂັ້ນຕອນ ແລະ ວິທີການ

### 3.1 ຫຼັກການສຳຫຼວດ ຂຸດຄົ້ນໄມ້

ການສຳຫຼວດໄມ້ຕໍ່ ແລະ ໄມ້ຊະນິດອື່ນ ເພື່ອຜະລິດຖ່ານຂາວ ທີ່ເກີດຕາມປ່າທຳມະຊາດ ໃຫ້ດຳເນີນໃນເຂດ ປ່າຜະລິດທີ່ມີ ແຜນຈັດສັນ, ເຂດກໍ່ສ້າງໂຄງລ່າງພື້ນຖານ, ເຂດຫັນປ່ຽນທີ່ດິນປ່າໄມ້, ເຂດປ່າໄມ້ທີ່ລັດຈັດສັນ ໃຫ້ບ້ານນຳໃຊ້, ເຂດທີ່ດິນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລັດໄດ້ມອບສິດນຳໃຊ້ທີ່ດິນ ໃຫ້ຢ່າງຖືກຕ້ອງ ຕາມກົດໝາຍ ແລະ ໃຫ້ສຳຫຼວດສຸ່ມດອນຕົວຢ່າງແບບເປັນລະບົບ (Systematic) ຫຼື ບໍ່ເປັນລະບົບ (Random) ເພື່ອປະເມີນບໍລິມາດ. ສ່ວນຈຳນວນດອນຕົວຢ່າງ ແລະ ຂະໜາດ ແມ່ນຂຶ້ນກັບສະພາບປ່າທີ່ຈະສຳຫຼວດ.

ການສຳຫຼວດໄມ້ ເພື່ອຜະລິດຖ່ານຂາວ ທີ່ຢູ່ໃນທີ່ດິນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປູກ ທີ່ໄດ້ຂຶ້ນທະບຽນ ບໍ່ຈຳເປັນດຳເນີນການສຳຫຼວດ.

### 3.2 ການສ້າງແຜນການ ແລະ ການອະນຸມັດແຜນການຂຸດຄົ້ນໄມ້ຜະລິດຖ່ານຂາວ

ການສ້າງ ແລະ ການອະນຸມັດແຜນການຂຸດຄົ້ນໄມ້ ເພື່ອຜະລິດຖ່ານຂາວ ໃຫ້ປະຕິບັດ ຕາມຂັ້ນຕອນ ດັ່ງນີ້:

1. ຂະແໜງປ່າໄມ້ຂັ້ນແຂວງ ສ້າງແຜນຂຸດຄົ້ນໄມ້ ຜະລິດຖ່ານຂາວ ບົນພື້ນຖານຂໍ້ມູນສຳຫຼວດຕົວຈິງ ຕາມຫຼັກການສຳຫຼວດທີ່ໄດ້ກຳນົດໄວ້ ໃນຂໍ້ 3.1 ຂອງຄຳແນະນຳສະບັບນີ້ ຈາກນັ້ນ ຈຶ່ງສົ່ງໃຫ້ ກົມປ່າໄມ້ ກ່ອນວັນທີ 30 ກັນຍາ ຂອງທຸກໆປີ;
2. ກົມປ່າໄມ້ ຄົ້ນຄວ້າ ສັງລວມແຜນການຂຸດຄົ້ນໄມ້ ປະຈຳປີຂອງບັນດາແຂວງ, ນະຄອນຫຼວງ ເພື່ອສະເໜີກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາຮັບຮອງ;
3. ກະຊວງກະສິກຳ ແລະ ປ່າໄມ້ ອະນຸມັດແຜນການຂຸດຄົ້ນໄມ້ ເພື່ອຜະລິດຖ່ານຂາວ ປະຈຳປີ;
4. ກົມປ່າໄມ້ ແຈ້ງແຜນການຂຸດຄົ້ນໄມ້ ເພື່ອຜະລິດຖ່ານຂາວ ປະຈຳປີ ໃຫ້ຂະແໜງປ່າໄມ້ຂັ້ນແຂວງ, ຈັດຕັ້ງປະຕິບັດຕາມການອະນຸມັດຂອງກະຊວງກະສິກຳ ແລະ ປ່າໄມ້ ພ້ອມທັງແຈ້ງໃຫ້ຂະແໜງການທີ່ກ່ຽວຂ້ອງ ຊາບ;
5. ຂະແໜງປ່າໄມ້ຂັ້ນແຂວງ, ອອກໃບອະນຸຍາດຂຸດຄົ້ນໄມ້ ເພື່ອຜະລິດຖ່ານຂາວ ຕາມແຈ້ງການ ຂອງກົມປ່າໄມ້.

ສຳລັບໄມ້ຕໍ່ ແລະ ໄມ້ຊະນິດອື່ນ ເພື່ອຜະລິດຖ່ານຂາວ ທີ່ຂຸດຄົ້ນຈາກທີ່ດິນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປູກ ແລະ ຟື້ນຟູ ທີ່ໄດ້ຂຶ້ນທະບຽນຖືກຕ້ອງແລ້ວ ບໍ່ຈຳເປັນຂໍອະນຸມັດແຜນການຂຸດຄົ້ນ ຕາມຂັ້ນຕອນທາງດ້ານວິຊາການ ແຕ່ຕ້ອງໄດ້ລາຍງານຂໍ້ມູນບໍລິມາດໄມ້ ໃຫ້ຫ້ອງການ ກະສິກຳ ແລະ ປ່າໄມ້ຂັ້ນເມືອງ.

### 3.3 ການຂຸດຄົ້ນ ແລະ ເຄື່ອນຍ້າຍໄມ້

ການຂຸດຄົ້ນ ແລະ ເຄື່ອນຍ້າຍໄມ້ ເພື່ອຜະລິດຖ່ານຂາວ ໃຫ້ປະຕິບັດ ດັ່ງນີ້:

1. ການຂຸດຄົ້ນໄມ້ຕໍ່ ແລະ ໄມ້ຊະນິດອື່ນ ຈາກ ເຂດກໍ່ສ້າງໂຄງລ່າງພື້ນຖານ, ເຂດຫັນປ່ຽນທີ່ດິນປ່າໄມ້, ເຂດປ່າໄມ້ທີ່ລັດຈັດສັນໃຫ້ບ້ານນຳໃຊ້ ສາມາດດຳເນີນໄດ້ຕະຫຼອດປີ ແຕ່ຕ້ອງໄດ້ຮັບການອະນຸມັດ ແຜນການຂຸດຄົ້ນ ແລະ ມີການຕິດຕາມກວດກາຢັ້ງຢືນຈາກຂະແໜງປ່າໄມ້ແຂວງ, ນະຄອນຫຼວງ;

   ສຳລັບໄມ້ຕໍ່ ແລະ ໄມ້ຊະນິດອື່ນ ທີ່ຂຸດຄົ້ນຈາກສວນປູກ ແລະ ເຂດຟື້ນຟູປ່າ ທີ່ໄດ້ຂຶ້ນທະບຽນຢ່າງຖືກຕ້ອງ, ເຈົ້າຂອງປ່າປູກ ສາມາດຂຸດຄົ້ນໄດ້ຕະຫຼອດປີ ບໍ່ຈຳເປັນຂໍອະນຸມັດແຜນຂຸດຄົ້ນ ແຕ່ໃຫ້ມີການ ຕິດຕາມ, ກວດກາ ແລະ ຢັ້ງຢືນ ຂອງຈຸງານກະສິກຳ ແລະ ປ່າໄມ້ບ້ານ ແລະ ອົງການປົກຄອງບ້ານກ່ຽວຂ້ອງ.

2. ການເຄື່ອນຍ້າຍໄມ້ຕໍ່ ແລະ ໄມ້ຊະນິດອື່ນ ທີ່ຂຸດຄົ້ນຢູ່ໃນ ເຂດກໍ່ສ້າງໂຄງລ່າງພື້ນຖານ, ເຂດຫັນປ່ຽນ ທີ່ດິນປ່າໄມ້, ເຂດປ່າໄມ້ທີ່ລັດຈັດສັນໃຫ້ບ້ານນຳໃຊ້ ທີ່ເຄື່ອນຍ້າຍ ລະຫວ່າງ ເມືອງຕໍ່ເມືອງ ພາຍໃນແຂວງ ຕ້ອງມີເອກະສານເຄື່ອນຍ້າຍຈາກ ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ **(ແບບພິມ ປມ 1).** ສ່ວນການເຄື່ອນຍ້າຍໄມ້ ຈາກ ແຂວງ ຫາ ແຂວງ ຫຼື ພາຍໃນປະເທດ ຕ້ອງມີເອກະສານ ເຄື່ອນຍ້າຍຈາກ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ **(ແບບພິມ ປມ 2)**;

ສຳລັບ ໄມ້ຕໍ່ ແລະ ໄມ້ຊະນິດອື່ນ ທີ່ຂຸດຄົ້ນ ຈາກປ່າປູກ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປູກ ແລະ ຟື້ນຟູປ່າ ທີ່ໄດ້ຂຶ້ນທະບຽນຖືກຕ້ອງແລ້ວ ບໍ່ຈຳເປັນຂໍອະນຸຍາດເຄື່ອນຍ້າຍ ພາຍໃນແຂວງ ແລະ ຕ່າງແຂວງ ແຕ່ຕ້ອງໄດ້ລາຍງານບໍລິມາດ ຫຼື ນ້ຳໜັກ ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ເພື່ອອອກໃບຢັ້ງຢືນ **(ແບບພິມ ປມ 3).**

**3.4 ຫົວໜ່ວຍວັດແທກບໍລິມາດໄມ້**

ຫົວໜ່ວຍ ວັດແທກບໍລິມາດໄມ້ ໃຫ້ຖືເອົາບໍລິມາດກອງໄມ້ຟືນ ໂດຍຖືເອົາຂະໜາດຂອງກອງໄມ້ຟືນ 1 ແມັດ x 1 ແມັດ x 1 ແມັດ (ແມັດກ້ອນໄມ້ຟືນ) ເປັນພື້ນຖານຄິດໄລ່. ໄມ້ຕິ້ວ ຫຼື ໄມ້ຊະນິດອື່ນ 1 ແມັດກ້ອນ ສາມາດ ຜະລິດຖ່ານຂາວໄດ້ ປະມານ 65-75 ກິໂລກຣາມ.

**3.5 ການເຄື່ອນຍ້າຍຖ່ານຂາວ ພາຍໃນ ແລະ ສົ່ງອອກ**

- ການເຄື່ອນຍ້າຍຜະລິດຕະພັນຖ່ານຂາວ ຕ້ອງໄດ້ກວດກາຄວາມສົມດູນ ລະຫວ່າງ ຕົວເລກທີ່ໄດ້ຮັບການອະນຸຍາດໃຫ້ຂຸດຄົ້ນໄມ້ຕິ້ວ ແລະ ໄມ້ຊະນິດອື່ນ (ໄມ້ສົ້ນເຂົ້າ) ແລະ ປະລິມານຖ່ານຂາວ (ສົ້ນອອກ) ທີ່ຜະລິດໄດ້ ຈາກຄະນະກຳມະການກວດກາຜະລິດຕະພັນຖ່ານຂາວ ເພື່ອເຄື່ອນຍ້າຍພາຍໃນ ແລະ ສົ່ງອອກຕ່າງປະເທດ;
- ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ອອກອະນຸຍາດ ເຄື່ອນຍ້າຍຜະລິດຕະພັນຖ່ານຂາວ ພາຍໃນປະເທດ (**ແບບພິມ ປມ 4**) ແລະ ບົດບັນທຶກກວດກາຜະລິດຕະພັນຖ່ານຂາວ ຂອງຄະນະກຳມະການ ເພື່ອເຄື່ອນຍ້າຍພາຍໃນປະເທດ (**ແບບພິມ ປມ 5**);
- ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ອອກອະນຸຍາດ ເຄື່ອນຍ້າຍຜະລິດຕະພັນຖ່ານຂາວ ສົ່ງອອກໄປຕ່າງປະເທດ (**ແບບພິມ ປມ 6**) ແລະ ບົດບັນທຶກກວດກາຜະລິດຕະພັນຖ່ານຂາວ ຂອງຄະນະກຳມະການ ເພື່ອເຄື່ອນຍ້າຍ ສົ່ງອອກຕ່າງປະເທດ (**ແບບພິມ ປມ 7**);

ສຳລັບ ການເກັບຄ່າທຳນຽມ ແລະ ຄ່າບໍລິການ ລວມທັງ ອັດຕາຊັບພະຍາກອນທຳມະຊາດ ແລະ ອັດຕາພາສີຂາອອກ ແມ່ນໃຫ້ປະຕິບັດ ຕາມລັດຖະບັນຍັດຂອງປະທານປະເທດ ທີ່ມີຜົນບັງຄັບໃຊ້ ໃນແຕ່ລະໄລຍະ.

## 4. ກົນໄກການປະສານງານ

ເພີ່ມທະວີ ເອົາໃຈໃສ່ສ້າງກົນໄກການປະສານງານ ລະຫວ່າງ ຂະແໜງການກ່ຽວຂ້ອງ ຂອງພາກລັດ, ພາກທຸລະກິດ ແລະ ປະຊາຊົນ ເພື່ອເຮັດໃຫ້ການຄຸ້ມຄອງການຜະລິດຖ່ານຂາວ ເຂົ້າສູ່ລະບົບ ແລະ ການບໍລິການ ມີຄວາມຄ່ອງຕົວ ແລະ ວ່ອງໄວ, ຫຼຸດຜ່ອນຂັ້ນຕອນ ທາງວິຊາການຕ່າງໆ ທີ່ເຫັນວ່າເປັນສິ່ງກີດຂວາງ ແລະ ບໍ່ເປັນການຊຸກຍູ້ການຜະລິດຖ່ານຂາວ.

## 5. ວິທີການຈັດຕັ້ງປະຕິບັດ

1. ກົມປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ເປັນເຈົ້າການ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໂຄສະນາເຜີຍແຜ່, ຝຶກອົບຮົມ, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ;
2. ມອບໃຫ້ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ, ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ແລະ ອົງການປົກຄອງບ້ານ ເປັນເຈົ້າການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ດຳເນີນການຈັດຕັ້ງປະຕິບັດ ການຄຸ້ມຄອງການຂຸດຄົ້ນ, ເຄື່ອນຍ້າຍ ໄມ້ຕິ້ວ ແລະ ໄມ້ຊະນິດອື່ນ ເພື່ອຜະລິດຖ່ານຂາວ ແລະ ການເຄື່ອນຍ້າຍຖ່ານຂາວ ພາຍໃນ ແລະ ສົ່ງອອກ ຕາມຄຳແນະນຳສະບັບນີ້ ຢ່າງເຂັ້ມງວດ;
3. ໃນການຈັດຕັ້ງປະຕິບັດຕົວຈິງ ມີຂໍ້ສະດວກ, ຂໍ້ຫຍຸ້ງຍາກແນວໃດ ໃຫ້ລາຍງານກະຊວງກະສິກຳ ແລະ ປ່າໄມ້ ຕາມຂັ້ນຕອນ ເພື່ອພິຈາລະນາຫາວິທີແກ້ໄຂ ຢ່າງທັນການ.

ຄຳແນະນຳ ສະບັບນີ້ ໃຊ້ປ່ຽນແທນ ຄຳແນະນຳ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0050/ກປ, ລົງວັນທີ 18 ກັນຍາ 2017 ແລະ ມີຜົນນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ລັດຖະມົນຕີ**

ປອ. ເພັດ ພົມພິພັກ

**ປມ 1**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ.................................
ເມືອງ.................................
ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເລກທີ: ............/ຫກປມ
ທີ່.................ລົງວັນທີ:.....................

# ໃບອະນຸຍາດ

## ເຄື່ອນຍ້າຍໄມ້ຕົ້ວ ແລະ ໄມ້ຊະນິດອື່ນ ເພື່ອຜະລິດຖ່ານຂາວ ທີ່ເກີດຕາມປ່າທຳມະຊາດ ທີ່ຂຸດຄົ້ນຢູ່ໃນເຂດກໍ່ສ້າງພື້ນຖານໂຄງລ່າງ, ເຂດຫັນປ່ຽນທີ່ດິນປ່າໄມ້, ເຂດປ່າໄມ້ທີ່ລັດຈັດສັນໃຫ້ບ້ານນຳໃຊ້ ທີ່ເຄື່ອນຍ້າຍລະຫວ່າງເມືອງຕໍ່ເມືອງ ພາຍໃນແຂວງ ແລະ ນະຄອນຫຼວງວຽງຈັນ

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ແຈ້ງການອະນຸມັດແຜນການຂຸດຄົ້ນ ໄມ້ຕົ້ວ ແລະ ໄມ້ຊະນິດອື່ນ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ ................./ກປ, ລົງວັນທີ .................
- ອີງຕາມ ໃບອະນຸຍາດຂຸດຄົ້ນໄມ້ຕົ້ວ ແລະ ໄມ້ຊະນິດອື່ນ ສະບັບເລກທີ ............, ລົງວັນທີ.....................
- ອີງຕາມ ສັນຍາຊື້-ຂາຍ ໄມ້ຕົ້ວ ແລະ ໄມ້ຊະນິດອື່ນ ສະບັບເລກທີ .................., ລົງວັນທີ....................
- ອີງຕາມ ການສະເໜີ ຂອງໂຮງງານ/ບໍລິສັດ................ ສະບັບເລກທີ................, ລົງວັນທີ ...............

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.................ອອກໃບອະນຸຍາດ ເຄື່ອນຍ້າຍໄມ້......................... ເພື່ອຜະລິດຖ່ານຂາວ ທີ່ເກີດຕາມປ່າທຳມະຊາດ ທີ່ຂຸດຄົ້ນຢູ່ໃນເຂດ....................................................... ເພື່ອເຄື່ອນຍ້າຍຈາກ ບ້ານ..........................ເມືອງ......................, ແຂວງ............................ເຖິງບ້ານ ..........................ເມືອງ.........................ແຂວງ.................... ຈຳນວນທັງ............................... ດັ່ງລາຍລະອຽດ ລຸ່ມນີ້:

| ລ/ດ | ປະເພດໄມ້ | ຈຳນວນ | ບໍລິມາດ (ແມັດກ້ອນ) | ນ້ຳໜັກ (ໂຕນ) | ມູນຄ່າ (ກີບ) |
|---|---|---|---|---|---|
| | | | | | |
| | **ລວມ** | | | | |

1. ໃບອະນຸຍາດເຄື່ອນຍ້າຍນີ້ ນຳໃຊ້ໄດ້ ແຕ່ວັນທີ.............................ເຖິງ ວັນທີ.............................
2. ຫ້າມບໍ່ໃຫ້ເຄື່ອນຍ້າຍ ໄມ້ຕົ້ວ ແລະ ໄມ້ຊະນິດອື່ນ ເພື່ອຜະລິດຖ່ານຂາວ ແຕ່ 18:00 ໂມງແລງ ຫາ 6:00 ໂມງເຊົ້າ;
3. ເວລາເຄື່ອນຍ້າຍໄມ້ຕົ້ວ ແລະ ໄມ້ຊະນິດອື່ນ ເພື່ອຜະລິດຖ່ານຂາວ ຕ້ອງໄດ້ເອົາ ໃບອະນຸຍາດເຄື່ອນຍ້າຍ ສະບັບນີ້ ໄປພ້ອມທຸກໆຄັ້ງ ເພື່ອແຈ້ງຕໍ່ເຈົ້າໜ້າທີ່ກວດກາ.

ດັ່ງນັ້ນ, ຈຶ່ງອອກໃບອະນຸຍາດເຄື່ອນຍ້າຍສະບັບນີ້ ເພື່ອເປັນບ່ອນອີງໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ.

**ຫົວໜ້າ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ**

**ປມ 2**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ.............................

ພະແນກກະສິກຳ ແລະ ປ່າໄມ້ແຂວງ ເລກທີ: ............/ພກປ

ທີ່.................ລົງວັນທີ:....................

# ໃບອະນຸຍາດ

**ເຄື່ອນຍ້າຍໄມ້ຕິ້ວ ແລະ ໄມ້ຊະນິດອື່ນ ເພື່ອຜະລິດຖ່ານຂາວ ທີ່ເກີດຕາມປ່າທຳມະຊາດ ທີ່ຂຸດຄົ້ນຢູ່ໃນເຂດກໍ່ສ້າງພື້ນຖານໂຄງລ່າງ, ເຂດຫັນປ່ຽນທີ່ດິນປ່າໄມ້, ເຂດປ່າໄມ້ທີ່ລັດຈັດສັນໃຫ້ບ້ານນຳໃຊ້ ທີ່ເຄື່ອນຍ້າຍ ພາຍໃນປະເທດ ຫຼື ລະຫວ່າງ ແຂວງ ຫາ ແຂວງ**

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ແຈ້ງການອະນຸມັດແຜນການຂຸດຄົ້ນ ໄມ້ຕິ້ວ ແລະ ໄມ້ຊະນິດອື່ນ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ ................./ກປ, ລົງວັນທີ .................
- ອີງຕາມ ໃບອະນຸຍາດຂຸດຄົ້ນໄມ້ຕິ້ວ ແລະ ໄມ້ຊະນິດອື່ນ ສະບັບເລກທີ ............, ລົງວັນທີ.....................
- ອີງຕາມ ສັນຍາຊື້-ຂາຍ ໄມ້ຕິ້ວ ແລະ ໄມ້ຊະນິດອື່ນ ສະບັບເລກທີ .................., ລົງວັນທີ....................
- ອີງຕາມ ການສະເໜີ ຂອງໂຮງງານ/ບໍລິສັດ................ ສະບັບເລກທີ................, ລົງວັນທີ ..............

ພະແນກກະສິກຳ ແລະ ປ່າໄມ້ແຂວງ..................ອອກໃບອະນຸຍາດ ເຄື່ອນຍ້າຍໄມ້....................... ເພື່ອຜະລິດຖ່ານຂາວ ທີ່ເກີດຕາມປ່າທຳມະຊາດ ທີ່ຂຸດຄົ້ນຢູ່ໃນເຂດ....................................................... ເພື່ອເຄື່ອນຍ້າຍຈາກ ບ້ານ..........................ເມືອງ......................, ແຂວງ............................ເຖິງບ້ານ ..........................ເມືອງ........................ແຂວງ.................... ຈຳນວນທັງ............................... ດັ່ງລາຍລະອຽດ ລຸ່ມນີ້:

| ລ/ດ | ປະເພດໄມ້ | ຈຳນວນ | ບໍລິມາດ (ແມັດກ້ອນ) | ນ້ຳໜັກ (ໂຕນ) | ມູນຄ່າ (ກີບ) |
|---|---|---|---|---|---|
| | | | | | |
| | **ລວມ** | | | | |

1. ໃບອະນຸຍາດເຄື່ອນຍ້າຍນີ້ ນຳໃຊ້ໄດ້ ແຕ່ວັນທີ.............................ເຖິງ ວັນທີ.............................
2. ຫ້າມບໍ່ໃຫ້ເຄື່ອນຍ້າຍ ໄມ້ຕິ້ວ ແລະ ໄມ້ຊະນິດອື່ນ ເພື່ອຜະລິດຖ່ານຂາວ ແຕ່ 18:00 ໂມງແລງ ຫາ 6:00 ໂມງເຊົ້າ;
3. ເວລາເຄື່ອນຍ້າຍໄມ້ຕິ້ວ ແລະ ໄມ້ຊະນິດອື່ນ ເພື່ອຜະລິດຖ່ານຂາວ ຕ້ອງໄດ້ເອົາ ໃບອະນຸຍາດເຄື່ອນຍ້າຍ ສະບັບນີ້ ໄປພ້ອມທຸກໆຄັ້ງ ເພື່ອແຈ້ງຕໍ່ເຈົ້າໜ້າທີ່ກວດກາ.

ດັ່ງນັ້ນ, ຈຶ່ງອອກໃບອະນຸຍາດເຄື່ອນຍ້າຍສະບັບນີ້ ເພື່ອເປັນບ່ອນອີງໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ.

**ຫົວໜ້າ ພະແນກກະສິກຳ ແລະ ປ່າໄມ້ແຂວງ**

**ປມ 3**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ................................
ເມືອງ................................
ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເລກທີ: ............./ຫກປມ
ທີ່.................ລົງວັນທີ:....................

# ໃບຢັ້ງຢືນ

## ໄມ້ຕິ້ວ ແລະ ໄມ້ຊະນິດອື່ນ ເພື່ອຜະລິດຖ່ານຂາວ ຈາກປ່າປູກ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປູກ ແລະ ຟື້ນຟູປ່າ ທີ່ໄດ້ຂຶ້ນທະບຽນ

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ)ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ໃບທະບຽນປ່າປູກ ແລະ ປ່າຟື້ນຟູ ສະບັບເລກທີ..................... ລົງວັນທີ..........................
- ອີງຕາມ ສັນຍາຊື້-ຂາຍ ໄມ້ຕິ້ວ ແລະ ໄມ້ຊະນິດອື່ນ ສະບັບເລກທີ ....................., ລົງວັນທີ ................
- ອີງຕາມ ການສະເໜີ ຂອງໂຮງງານ/ບໍລິສັດ................ ເລກທີ................, ລົງວັນທີ ......................

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.....................ອອກໜັງສືຢັ້ງຢືນໄມ້..................... ເພື່ອຜະລິດຖ່ານຂາວ ຈາກປ່າປູກ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປູກ ແລະ ຟື້ນຟູປ່າ ທີ່ໄດ້ຂຶ້ນທະບຽນຖືກຕ້ອງແລ້ວ ທີ່ຂຸດຄົ້ນຢູ່ໃນເຂດ.......................................................................................................
ເພື່ອເຄື່ອນຍ້າຍຈາກ ບ້ານ..........................ເມືອງ....................., ແຂວງ............................ເຖິງບ້ານ ..........................ເມືອງ........................ແຂວງ................... ຈຳນວນທັງ..............................
ດັ່ງລາຍລະອຽດ ລຸ່ມນີ້:

| ລ/ດ | ປະເພດໄມ້ | ຈຳນວນ | ບໍລິມາດ (ແມັດກ້ອນ) | ນ້ຳໜັກ (ໂຕນ) | ມູນຄ່າ (ກີບ) |
|---|---|---|---|---|---|
| | | | | | |
| | **ລວມ** | | | | |

1. ໃບຢັ້ງຢືນ ສະບັບນີ້ ນຳໃຊ້ໄດ້ ແຕ່ວັນທີ.............................ເຖິງ ວັນທີ.............................
2. ຫ້າມບໍ່ໃຫ້ເຄື່ອນຍ້າຍ ໄມ້ຕິ້ວ ແລະ ໄມ້ຊະຣິດອື່ນ ເພື່ອຜະລິດຖ່ານຂາວ ແຕ່ 18:00 ໂມງແລງ ຫາ 6:00 ໂມງເຊົ້າ;
3. ເວລາເຄື່ອນຍ້າຍ ຕ້ອງໄດ້ເອົາໃບຢັ້ງຢືນ ສະບັບນີ້ໄປພ້ອມທຸກໆຄັ້ງ ເພື່ອແຈ້ງຕໍ່ເຈົ້າໜ້າທີ່ກວດກາ.

ດັ່ງນັ້ນ, ຈຶ່ງອອກໃບຢັ້ງຢືນສະບັບນີ້ ເພື່ອເປັນບ່ອນອີງໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ.

**ຫົວໜ້າ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ**

**ປມ 4**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ............................
ເມືອງ.............................
ຫ້ອງກະສິກໍາ ແລະ ປ່າໄມ້ເມືອງ

ເລກທີ: ............/ຫກປມ
ທີ່.................ລົງວັນທີ:.....................

# ໃບອະນຸຍາດ

## ເຄື່ອນຍ້າຍ ຜະລິດຕະພັນຖ່ານຂາວ ພາຍໃນປະເທດ

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ການສະເໜີ ຂອງໂຮງງານ/ບໍລິສັດ................ ເລກທີ................, ລົງວັນທີ ......................
- ອີງຕາມ ບົດບັນທຶກ ການກວດກາ ຜະລິດຕະພັນຖ່ານຂາວ ເພື່ອເຄື່ອນຍ້າຍ ພາຍໃນປະເທດ ຂອງຄະນະກໍາມະການ ຄັ້ງວັນທີ.........................

ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ.......................ອອກໃບອະນຸຍາດ ເຄື່ອນຍ້າຍຜະລິດຕະພັນຖ່ານຂາວ ທີ່ເຄື່ອນຍ້າຍຈາກ ບ້ານ..........................ເມືອງ......................, ແຂວງ............................ເຖິງບ້ານ ..........................ເມືອງ........................ແຂວງ................... ຈໍານວນທັງ.............................. ດັ່ງລາຍລະອຽດ ລຸ່ມນີ້:

**1. ຂໍ້ມູນຂອງໂຮງງານ/ບໍລິສັດ:**

1.1. ໃບທະບຽນວິສາຫະກິດ ເລກທີ ........................................., ລົງວັນທີ ...............................
1.2. ໃບອະນຸຍາດດໍາເນີນກິດຈະການໂຮງງານ ເລກທີ ............................, ລົງວັນທີ............................
1.3. ໃບຢັ້ງຢືນການຊໍາລະອາກອນປີຜ່ານມາ ເລກທີ ..............................., ລົງວັນທີ...........................
1.4. ສັນຍາຊື້-ຂາຍ ຜະລິດຕະພັນຖ່ານຂາວ ເລກທີ .................................., ລົງວັນທີ .........................
1.5. ໃບອະນຸມັດແຜນການຂຸດຄົ້ນໄມ້ ຂອງກະຊວງ ກປ ເລກທີ .................., ລົງວັນທີ ..........................
1.6. ໃບອະນຸຍາດຂຸດຄົ້ນໄມ້ ເລກທີ ......................................, ລົງວັນທີ ..................................

**2. ຜະລິດຕະພັນຖ່ານຂາວ ທີ່ໄດ້ລະບຸໄວ້ໃນຕາຕະລາງ ໄດ້ຂົນຂຶ້ນລົດ:.......**

| ລ/ດ | ຍີ່ຫໍ້ລົດ | ທະບຽນລົດຂົນສົ່ງ | ຈໍານວນ (ເປົາ, ແກັດ) | ນໍ້າໜັກ (ໂຕນ) |
|---|---|---|---|---|
| 1 | | | | |
| 2 | | | | |
| 3 | | | | |
| 4 | | | | |
| 5 | | | | |
| 6 | | | | |
| 7 | | | | |
| 8 | | | | |

| | | | | |
|---|---|---|---|---|
| 9 | | | | |
| 10 | | | | |
| 11 | | | | |
| 12 | | | | |
| | **ລວມ** | | | |

1. ໃບເຄື່ອນຍ້າຍ ຜະລິດຕະພັນຖ່ານຂາວ ສະບັບນີ້ ນຳໃຊ້ໄດ້ ແຕ່ວັນທີ........................ເຖິງ ວັນທີ....................
2. ຫ້າມບໍ່ໃຫ້ເຄື່ອນຍ້າຍ ຜະລິດຕະພັນຖ່ານຂາວ ແຕ່ 18:00 ໂມງແລງ ຫາ 6:00 ໂມງເຊົ້າ;
3. ເວລາເຄື່ອນຍ້າຍຜະລິດຕະພັນຖ່ານຂາວ ຕ້ອງໄດ້ເອົາເອກະສານເຄື່ອນຍ້າຍ ສະບັບນີ້ ໄປພ້ອມທຸກໆຄັ້ງ ເພື່ອແຈ້ງຕໍ່ເຈົ້າໜ້າທີ່ໃນເວລາກວດກາ;
4. ໃນກໍລະນີກວດພົບເຫັນວ່າມີການເອົາສິນຄ້າອື່ນປະປົນ ຫຼື ບໍ່ສອດຄ່ອງ ຕາມໃບອະນຸຍາດສະບັບນີ້, ຄະນະກຳມະການ, ເຈົ້າຂອງໂຮງງານ/ບໍລິສັດ ແລະ ເຈົ້າຂອງລົດ ຕ້ອງເປັນຜູ້ຮັບຜິດຊອບໂດຍກົງຕໍ່ກົດໝາຍ;
5. ຫ້າມປອມແປງ ແລະ ຊື້-ຂາຍ ໃບເຄື່ອນຍ້າຍ ຜະລິດຕະພັນຖ່ານຂາວ ສະບັບນີ້ຢ່າງເດັດຂາດ, ຖ້າຜູ້ໃດລະເມີດຈະໄດ້ຮັບໂທດຕາມກົດໝາຍ.

ດັ່ງນັ້ນ, ຈຶ່ງອອກໃບອະນຸຍາດເຄື່ອນຍ້າຍສະບັບນີ້ ເພື່ອເປັນບ່ອນອີງໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ.

**ຫົວໜ້າ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ**

ປມ 5

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ..........................
ເມືອງ...........................
ຫ້ອງກະສິກຳ ແລະ ປ່າໄມ້ເມືອງ

# ບົດບັນທຶກ

## ການກວດກາ ຜະລິດຕະພັນຖ່ານຂາວ ເພື່ອເຄື່ອນຍ້າຍ ພາຍໃນປະເທດ

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ການສະເໜີ ຂອງໂຮງງານ/ບໍລິສັດ.............. ເລກທີ................, ລົງວັນທີ ....................

ໃນວັນທີ .............. ເດືອນ.............. ປີ..................ເວລາ ..................... ໂມງ, ໄດ້ມີຄະນະກຳມະການກວດກາຜະລິດຕະພັນ ຖ່ານຂາວ, ຊຶ່ງປະກອບດ້ວຍບັນດາຜູ້ຕາງໜ້າ ດັ່ງນີ້:

1. ທ່ານ ......................................................, ຕາງໜ້າ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ;
2. ທ່ານ ......................................................, ຕາງໜ້າ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ;
3. ທ່ານ ......................................................, ຕາງໜ້າ ອົງການປົກຄອງບ້ານ.

ໄດ້ພ້ອມກັນລົງກວດກາຜະລິດຕະພັນ ຖ່ານຂາວ ຂອງໂຮງງານ/ບໍລິສັດ ............................................ ຕັ້ງຢູ່: ບ້ານ ........................................, ເມືອງ ...................................ແຂວງ/ນະຄອນຫຼວງວຽງຈັນ ໂດຍຊ້ອງໜ້າທ່ານ ....................................., ໃນນາມ........................................., ໂທລະສັບຕັ້ງໂຕະ : ...... ......................, ມືຖື: .................................... ເພື່ອເຄື່ອນຍ້າຍຜະລິດຕະພັນຖ່ານຂາວພາຍໃນປະເທດ ລະຫວ່າງ ເມືອງ................ແຂວງ................ຫາ ເມືອງ................ແຂວງ................. ດັ່ງລາຍລະອຽດ ລຸ່ມນີ້:

**1. ຂໍ້ມູນຂອງໂຮງງານ/ບໍລິສັດ:**

1.1. ໃບທະບຽນວິສາຫະກິດ ເລກທີ ........................................., ລົງວັນທີ ............................
1.2. ໃບອະນຸຍາດດຳເນີນກິດຈະການໂຮງງານ ເລກທີ ............................, ລົງວັນທີ.........................
1.3. ໃບຢັ້ງຢືນການຊຳລະອາກອນປີຜ່ານມາ ເລກທີ ..............................., ລົງວັນທີ........................
1.4. ສັນຍາຊື້-ຂາຍ ຜະລິດຕະພັນຖ່ານຂາວ ເລກທີ ................................., ລົງວັນທີ .......................
1.5. ໃບອະນຸມັດແຜນການຂຸດຄົ້ນໄມ້ ຂອງກະຊວງ ກປ ເລກທີ .................., ລົງວັນທີ .......................
1.6. ໃບອະນຸຍາດຂຸດຄົ້ນໄມ້ ເລກທີ ......................................, ລົງວັນທີ ...............................

**2. ລາຍການ ຜະລິດຕະພັນຖ່ານຂາວ ທີ່ຈະເຄື່ອນຍ້າຍ ຄັ້ງນີ້:**

1.......................................................................................................................

2.......................................................................................................................

3.......................................................................................................................

4.......................................................................................................................

5.......................................................................................................................

**3. ຜະລິດຕະພັນຖ່ານຂາວ ທີ່ໄດ້ລະບຸໄວ້ໃນຕາຕະລາງ ໄດ້ຂົນຂຶ້ນລົດ:.......**

| ລ/ດ | ຍີ່ຫໍ້ລົດ | ທະບຽນລົດຂົນສົ່ງ | ຈຳນວນ (ເປົາ, ແກັດ) | ນ້ຳໜັກ (ໂຕນ) |
|---|---|---|---|---|
| 1 | | | | |
| 2 | | | | |
| 3 | | | | |
| 4 | | | | |
| 5 | | | | |
| 6 | | | | |
| 7 | | | | |
| 8 | | | | |
| 9 | | | | |
| 10 | | | | |
| 11 | | | | |
| 12 | | | | |
| | **ລວມ** | | | |

ໂຮງງານ/ບໍລິສັດ........................................................................ໄດ້ຢັ້ງຢືນວ່າ ລາຍການ, ຈຳນວນ ແລະ ນ້ຳໜັກ ໃນ ລາຍການ ແລະ ຕະລາງຂ້າງເທິງ ແມ່ນມີຄວາມຖືກຕ້ອງ ຕາມຄວາມຈິງ. ໃນກໍລະນີ, ຫາກມີເຈົ້າໜ້າທີ່ພາກສ່ວນທີ່ກ່ຽວຂ້ອງກວດກາພົບເຫັນ ລາຍການ, ຈຳນວນ ແລະ ນ້ຳໜັກ ບໍ່ສອດຄ່ອງ ຕາມຕະລາງຂ້າງເທິງ ໂຮງງານ/ບໍລິສັດ ຈະເປັນຜູ້ຮັບຜິດຊອບເອງທັງໝົດ ຕາມກົດໝາຍ ແລະ ລະບຽບການ.

ຜ່ານກວດກາ ເອກະສານ ແລະ ຜະລິດຕະພັນຖ່ານຂາວ ຕົວຈິງ ເຫັນວ່າ: ໂຮງງານ/ບໍລິສັດ...................... ສາມາດນຳ ເອົາບົດບັນທຶກ ສະບັບນີ້ ແລະ ເອກະສານທີ່ກ່ຽວຂ້ອງໄປສະເໜີຫາ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ........................ ເພື່ອດຳເນີນການ ຂໍອະຍາດເຄື່ອນຍ້າຍຜະລິດຕະພັນຖ່ານຂາວ ຈາກ ເມືອງ....................., ແຂວງ................................ຫາ ເມືອງ..................................ແຂວງ...................................

ດັ່ງນັ້ນ, ຄະນະກຳມະການກວດກາ ຈຶ່ງໄດ້ເຮັດບົດບັນທຶກສະບັບນີ້ໄວ້ ເພື່ອເປັນຫຼັກຖານ.

**ຜູ້ອຳນວຍການ ໂຮງງານ/ບໍລິສັດ**

**ຄະນະກຳມະການກວດກາຜະລິດຕະພັນຖ່ານຂາວ ເພື່ອເຄື່ອຍຍ້າຍພາຍໃນ**

**1. ຊື່: ............................, ລາຍເຊັນ: ..................**

**2. ຊື່: ............................, ລາຍເຊັນ: ..................**

**3. ຊື່: ............................, ລາຍເຊັນ: ..................**

ປມ 6

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
**Lao People's Democratic Republic**
**Peace Independence Democracy Unity Prosperity**

ແຂວງ/Province...............................
ພະແນກກະສິກຳ ແລະ ປ່າໄມ້ແຂວງ
Provincial Agriculture and Forestry Office ເລກທີ/No: ............/ພກປ/PAFO
ທີ່/At..................ລົງວັນທີ/dated:..................

# ໃບອະນຸຍາດ

## ເຄື່ອນຍ້າຍ ຜະລິດຕະພັນຖ່ານຂາວ ອອກຕ່າງປະເທດ

## Permit for Transportation of White Charcoal Products for Export

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019; Reference to the Law on Forestry (Revised) No. 64/NA, dated 13 June 2019
- ອີງຕາມ ການສະເໜີ ຂອງໂຮງງານ/ບໍລິສັດ /Reference to the Factory/Company request...................... ເລກທີ/ No:..................., ລົງວັນທີ/date:.............................
- ອີງຕາມ ບົດບັນທຶກ ການກວດກາ ຜະລິດຕະພັນຖ່ານຂາວ ເພື່ອເຄື່ອນຍ້າຍ ພາຍໃນປະເທດ ຂອງຄະນະກຳມະການ ຄັ້ງວັນທີ/Reference to the record of Technical Committee Inspection White Charcoal Products for Export, date:..........................
- ອີງຕາມ ໜັງສືສະເໜີ ຂອງຂະແໜງປ່າໄມ້ແຂວງ Reference to the Provincial Forestry Sector request................................................ເລກທີ No:................, ລົງວັນທີ date:…………………...

ພະແນກກະສິກຳ ແລະ ປ່າໄມ້ແຂວງ/ Provincial Agriculture and Forestry Office of......................... ອອກໃບອະນຸຍາດ ເຄື່ອນຍ້າຍ ຜະລິດຕະພັນຖ່ານຂາວ ອອກໄປຕ່າງປະເທດ ໃຫ້ແກ່/ issue this transport permit of White Charcoal Products for Export to.........................................................................................
ເພື່ອເຄື່ອນຍ້າຍອອກໄປປະເທດ/For Export to.........................ໂດຍຜ່ານດ່ານສາກົນ/Transit via……................
ແຂວງ /Province.............................................................ຈຳນວນ /Quantity…....................................

| **ລຳດັບ**/Item | **ລາຍການຖ່ານຂາວ**/Description | **ຈຳນວນ**/Qty | **ຫົວໜ່ວຍ**/Unit | **ໝາຍເຫດ**/Remarks |
|---|---|---|---|---|
| | | | | |
| | **ລວມ**/Total | | | |

1. ໃບເຄື່ອນຍ້າຍ ຜະລິດຕະພັນຖ່ານຂາວ ສະບັບນີ້ ນຳໃຊ້ໄດ້ ແຕ່ວັນທີ/This transport permit of White Charcoal Products is valid from ................................................ເຖິງ ວັນທີ/ to ...............................
2. ຫ້າມບໍ່ໃຫ້ເຄື່ອນຍ້າຍ ຜະລິດຕະພັນຖ່ານຂາວ ແຕ່ 6:00 ໂມງແລງ ຫາ 6:00 ໂມງເຊົ້າ/White Charcoal Products transport is prohibited from 6:00 pm to 6:00 am;

3. ເວລາເຄື່ອນຍ້າຍຜະລິດຕະພັນຖ່ານຂາວ ຕ້ອງໄດ້ເອົາເອກະສານເຄື່ອນຍ້າຍ ສະບັບນີ້ ໄປພ້ອມທຸກໆຄັ້ງ ເພື່ອແຈ້ງຕໍ່ເຈົ້າໜ້າທີ່ໃນເວລາກວດກາ/The transport permit is issued for each load of White Charcoal Products being transported and upon technical inspection by government;

4. ໃນກໍລະນີກວດພົບເຫັນວ່າມີການເອົາສິນຄ້າອື່ນປະປົນ ຫຼື ບໍ່ສອດຄ່ອງ ຕາມໃບອະນຸຍາດສະບັບນີ້, ຄະນະກຳມະການ, ເຈົ້າຂອງໂຮງງານ/ບໍລິສັດ ແລະ ເຈົ້າຂອງລົດ ຕ້ອງເປັນຜູ້ຮັບຜິດຊອບໂດຍກົງຕໍ່ກົດໝາຍ/ In the event that other products are found to be combined or inconsistent with this license, the committee, factory/company owners, and vehicle owners must be directly responsible for the law;

5. ຫ້າມປອມແປງ ແລະ ຊື້-ຂາຍ ໃບເຄື່ອນຍ້າຍ ຜະລິດຕະພັນຖ່ານຂາວ ສະບັບນີ້ຢ່າງເດັດຂາດ, ຖ້າຜູ້ໃດລະເມີດຈະໄດ້ຮັບໂທດຕາມກົດໝາຍ/ strictly forbidden to falsify, hand over, buy or sell this transport permit of White Charcoal Products for Export, if anyone violates it, he will be punished according to the law.

ດັ່ງນັ້ນ, ຈຶ່ງອອກໃບອະນຸຍາດສົ່ງອອກ ສະບັບນີ້ ເພື່ອເປັນບ່ອນອີງໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ
Therefore, this transport permit is issued as a reference for the relevant parties.

**ຫົວໜ້າ ພະແນກກະສິກຳ ແລະ ປ່າໄມ້ແຂວງ**
**Head of Provincial Agriculture and Forestry Office**

**ປມ 7**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ..............................

ພະແນກກະສິກຳ ແລະ ປ່າໄມ້ແຂວງ

ຂະແໜງປ່າໄມ້ແຂວງ

# ບົດບັນທຶກ

## ການກວດກາ ຜະລິດຕະພັນຖ່ານຂາວ ເພື່ອເຄື່ອນຍ້າຍ ສົ່ງອອກໄປຕ່າງປະເທດ

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ການສະເໜີ ຂອງໂຮງງານ/ບໍລິສັດ.............. ເລກທີ..............., ລົງວັນທີ ....................

ໃນວັນທີ .............. ເດືອນ.............. ປີ.................ເວລາ .................... ໂມງ, ໄດ້ມີຄະນະກຳມະການກວດກາຜະລິດຕະພັນ ຖ່ານຂາວ, ຊຶ່ງປະກອບດ້ວຍບັນດາຜູ້ຕາງໜ້າ ດັ່ງນີ້:

1. ທ່ານ ......................................................, ຕາງໜ້າ ຂະແໜງປ່າໄມ້ແຂວງ;
2. ທ່ານ ......................................................, ຕາງໜ້າ ຂະແໜງປ່າໄມ້ແຂວງ;
3. ທ່ານ ......................................................, ຕາງໜ້າ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ;

ໄດ້ພ້ອມກັນລົງກວດກາຜະລິດຕະພັນ ຖ່ານຂາວ ຂອງໂຮງງານ/ບໍລິສັດ ............................................. ຕັ້ງຢູ່: ບ້ານ ........................................, ເມືອງ ...................................ແຂວງ/ນະຄອນຫຼວງວຽງຈັນ ໂດຍຊ້ອງໜ້າທ່ານ ...................................., ໃນນາມ........................................., ໂທລະສັບຕັ້ງໂຕະ : ...... ......................, ມືຖື: .................................... ເພື່ອເຄື່ອນຍ້າຍຜະລິດຕະພັນຖ່ານຂາວສົ່ງອອກໄປປະເທດ...........................................ໂດຍຜ່ານດ່ານສາກົນ.............................ລຸ່ມນີ້:

### 1. ຂໍ້ມູນຂອງໂຮງງານ/ບໍລິສັດ:

1.1. ໃບທະບຽນວິສາຫະກິດ ເລກທີ ........................................, ລົງວັນທີ ............................

1.2. ໃບອະນຸຍາດດຳເນີນກິດຈະການໂຮງງານ ເລກທີ ............................, ລົງວັນທີ.........................

1.3. ໃບຢັ້ງຢືນການຊຳລະອາກອນປີຜ່ານມາ ເລກທີ ..............................., ລົງວັນທີ.......................

1.4. ສັນຍາຊື້-ຂາຍ ຜະລິດຕະພັນຖ່ານຂາວ ເລກທີ ................................., ລົງວັນທີ .......................

1.5. ໃບອະນຸມັດແຜນການຂຸດຄົ້ນໄມ້ ຂອງກະຊວງ ກປ ເລກທີ .................., ລົງວັນທີ ........................

1.6. ໃບອະນຸຍາດຂຸດຄົ້ນໄມ້ ເລກທີ ......................................, ລົງວັນທີ ...............................

### 2. ລາຍການ ຜະລິດຕະພັນຖ່ານຂາວ ທີ່ຈະເຄື່ອນຍ້າຍ ອອກໄປຕ່າງປະເທດ ດັ່ງນີ້:

1.................................................................................................................

2.................................................................................................................

3.................................................................................................................

4.................................................................................................................

5.................................................................................................................

**3. ຜະລິດຕະພັນຖ່ານຂາວ ທີ່ໄດ້ລະບຸໄວ້ໃນຕາຕະລາງ ໄດ້ຂົນຂຶ້ນລົດ:.......**

| ລ/ດ | ຍີ່ຫໍ້ລົດ | ທະບຽນລົດຂົນສົ່ງ | ຈຳນວນ (ເປົາ, ແກັດ) | ນ້ຳໜັກ (ໂຕນ) |
|---|---|---|---|---|
| 1 | | | | |
| 2 | | | | |
| 3 | | | | |
| 4 | | | | |
| 5 | | | | |
| 6 | | | | |
| 7 | | | | |
| 8 | | | | |
| 9 | | | | |
| 10 | | | | |
| 11 | | | | |
| 12 | | | | |
| | **ລວມ** | | | |

ໂຮງງານ/ບໍລິສັດ.....................................................................ໄດ້ຢັ້ງຢືນວ່າ ລາຍການ, ຈຳນວນ ແລະ ນ້ຳໜັກ ໃນ ລາຍການ ແລະ ຕະລາງຂ້າງເທິງ ແມ່ນມີຄວາມຖືກຕ້ອງ ຕາມຄວາມຈິງ. ໃນລະນີ, ຫາກມີ ເຈົ້າໜ້າທີ່ພາກສ່ວນທີ່ກ່ຽວຂ້ອງກວດກາພົບເຫັນ ລາຍການ, ຈຳນວນ ແລະ ນ້ຳໜັກ ບໍ່ສອດຄ່ອງ ຕາມຕະລາງຂ້າງເທິງ ໂຮງງານ/ບໍລິສັດ ຈະເປັນຜູ້ຮັບຜິດຊອບເອງທັງໝົດ ຕາມກົດໝາຍ ແລະ ລະບຽບການ.

ຜ່ານກວດກາ ເອກະສານ ແລະ ຜະລິດຕະພັນຖ່ານຂາວ ຕົວຈິງ ເຫັນວ່າ: ໂຮງງານ/ບໍລິສັດ...................... ສາມາດນຳ ເອົາບົດບັນທຶກ ສະບັບນີ້ ແລະ ເອກະສານທີ່ກ່ຽວຂ້ອງໄປສະເໜີຫາ ພະແນກກະສິກຳ ແລະ ປ່າໄມ້ແຂວງ ....................... ເພື່ອດຳເນີນການ ຂໍອະຍາດເຄື່ອນຍ້າຍຜະລິດຕະພັນຖ່ານຂາວ ໄປປະເທດ.......................

ດັ່ງນັ້ນ, ຄະນະກຳມະການກວດກາ ຈຶ່ງໄດ້ເຮັດບົດບັນທຶກສະບັບນີ້ໄວ້ ເພື່ອເປັນຫຼັກຖານ.

**ຜູ້ອຳນວຍການ ໂຮງງານ/ບໍລິສັດ**

**ຄະນະກາມະການກວດກາຜະລິດຕະພັນຖ່ານຂາວ**
**ເພື່ອເຄື່ອຍຍ້າຍ ສິ່ງອອກໄປຕ່າງປະເທດ**

**1. ຊື່: ..........................., ລາຍເຊັນ: .................**

**2. ຊື່: ..........................., ລາຍເຊັນ: .................**

**3. ຊື່: ..........................., ລາຍເຊັນ: .................**